ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 11 ຫາ 15 ພະຈິກ 2024




ກອງປະຊຸມ ຄັ້ງທີ I ຂອງຄະນະຊີ້ນຳວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂັ້ນສູນກາງ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ກອງປະຊຸມ ຄັ້ງທີ I ຂອງຄະນະຊີ້ນຳ ວຽກງານພັດທະນາ ຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂັ້ນສູນກາງ

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ລັດຖະບານໄດ້ຖືສຳຄັນວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ໂດຍໄດ້ຊີ້ນຳບັນດາຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ ຕໍ່ບັນດາຄາດໝາຍສູ້ຊົນຕາມມະຕິຂອງສະພາແຫ່ງຊາດທີ່ໄດ້ຮັບຮອງໃນແຕ່ລະປີ ໂດຍລັດຖະບານ ໄດ້ຈັດສັນງົບປະມານເຂົ້າໃສ່ການພັດທະນາ ຊົນນະບົດ ແລະ ແກ້ໄຂຄວາມທຸກຍາກໃນແຕ່ລະປີ ຜ່ານການຈັດຕັ້ງປະຕິບັດເຫັນໄດ້ວ່າ ວຽກງານດັ່ງກ່າວແມ່ນໄດ້ຮັບການພັດທະນາດີຂຶ້ນເປັນກ້າວໆ. ສະນັ້ນ, ເພື່ອເປັນການສັງເກດຕີລາຄາຄືນ ສະພາບການຈັດຕັ້ງປະຕິບັດໃນໄລຍະຜ່ານມາ ເພື່ອຊອກໃຫ້ເຫັນດ້ານດີ ທີ່ຈະຕ້ອງໄດ້ສືບຕໍ່ຮັກສາ ແລະ ເສີມຂະຫຍາຍໃຫ້ກວ້າງອອກເພື່ອວາງທິດທາງແຜນການໃນການຊຸກຍູ້ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກໃນຕໍ່ໜ້າ ແລະ ຂໍ້ຄົງຄ້າງທີ່ຈະຕ້ອງໄດ້ສຸມໃສ່ແກ້ໄຂໃຫ້ໄດ້ຢ່າງຈິງຈັງ. ໃນວັນທີ 7 ພະຈິກ 2024 ນີ້ ທີ່ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຈຶ່ງໄດ້ມີກອງປະຊຸມຄັ້ງທີ I ຂອງຄະນະຊີ້ນຳວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂັ້ນສູນກາງຂຶ້ນ ໂດຍໃຫ້ກຽດເປັນປະທານຂອງ ທ່ານ ສາດສະດາຈານ ປະລິນຍາເອກ ກິແກ້ວ ໄຂຄຳພິທູນ ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ຫົວໜ້າຄະນະຊີ້ນຳວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂັ້ນສູນກາງ, ເຂົ້າຮ່ວມໃນກອງປະຊຸມຄັ້ງນີ້ ມີທ່ານລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ບັນດາຮອງລັດຖະມົນຕີຈາກກະຊວງທີ່ກ່ຽວຂ້ອງ, ຫົວໜ້າກົມໃຫຍ່ການເມືອງກະຊວງປ້ອງກັນປະເທດ, ຮອງ




ຜູ້ວ່າການທະນາຄານແຫ່ງ ສປປ ລາວ, ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ຜູ້ອຳນວຍການທະນາຄານພັດທະນາຊົນນະບົດທີ່ເປັນຄະນະຊີ້ນຳວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂັ້ນສູນກາງ ພ້ອມດ້ວຍຄະນະກອງເລຂາຊ່ວຍວຽກຄະນະຊີ້ນຳວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ເຂົ້າຮ່ວມທັງໝົດ 40 ກວ່າທ່ານ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອເຜີຍແຜ່ຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍ ການແຕ່ງຕັ້ງຄະນະຊີ້ນຳວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂັ້ນສູນກາງ ສະບັບເລກທີ 121/ນຍ, ລົງວັນທີ 02 ກັນຍາ 2024, ຮັບຟັງການລາຍງານກ່ຽວກັບ ການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃນໄລຍະ ປີ 2021-2023 ຜ່ານມາ ແລະ ທິດທາງແຜນການຮອດປີ 2025, ພ້ອມດຽວກັນນີ້ໃນກອງປະຊຸມບັນດາຜູ້ແທນທີ່ເຂົ້າຮ່ວມ ຍັງໄດ້ພ້ອມກັນປຶກສາຫາລື ຄົ້ນຄວ້າ ປະກອບຄຳຄິດເຫັນເພື່ອຊອກບັນຫາ ແລະ ເຮັດໃຫ້ບັນຫາຕ່າງໆທີ່ໄດ້ຍົກຂຶ້ນໃນກອງປະຊຸມ ໄດ້ຮັບການຄົ້ນຄວ້າຢ່າງເລິກເຊິ່ງ ໂດຍສະເພາະກ່ຽວກັບການແບ່ງຄວາມຮັບຜິດຊອບພາຍໃນຄະນະ ແລະ ການພິຈາລະນາຮັບຮອງເອົາແຜນການເຄື່ອນໄຫວຂອງຄະນະຊີ້ນຳວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂັ້ນສູນກາງ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ເປັນຮູບປະທຳຕົວຈິງ ເພື່ອສ້າງການຫັນປ່ຽນຢ່າງແຂງແຮງເລິກເຊິ່ງຮອບດ້ານ ໃນວຽກງານພັດທະນາຊົນນະບົດ ຕາມທິດຊີ້ນຳຂອງພັກວາງອອກ.


<u>ຄະນະຮັບຜິດຊອບ:</u>
ທ່ານ ສີປະໄພ ໄຊສິງຄານ
ທ່ານ ສີສະຫວາດ ທອນດາລາ

<u>ບັນນາທິການ:</u>
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

<u>ຈັດໜ້າອອກແບບໂດຍ:</u>
ທ່ານ ນ. ສີອຳນອນ ໄຊຍະລາດ

<u>ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່:</u> ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;